# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດສຳມະນາກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ປະຈຳປີ 2023 ໃຫ້ພະນັກງານຂອງ ທຄຕລ ທຸກສາຂາທົ່ວປະເທດ



ເຊິ່ງໄດ້ຈັດຂຶ້ນໃນລະຫວ່າງເດືອນກັນຍາ ຫາ ເດືອນຕຸລາ 2023 ໂດຍໄດ້ຮັບກຽດເປັນປະທານ ຂອງ ທ່ານ ວຽງສຸກ ຈຸນທະວົງ ສະມາຊິກສະພາບໍລິຫານ ທຄຕລ, ຮອງຜູ້ອຳນວຍການ ທຄຕລ. ປະຈຸບັນ, ທຄຕລ ສຳເລັດການສຳມະນາ-ຝຶກອົບຮົມໃຫ້ແກ່ສາຂາທາງພາກເໜືອ ແລະ ພາກໃຕ້, ເຊິ່ງມີພະນັກງານທີ່ກ່ຽວຂ້ອງເຂົ້າ ຮ່ວມທັງໝົດ 217 ຄົນ ແລະ ຈະສືບຕໍ່ປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດຕາມແຜນພາຍໃນເດືອນຕຸລານີ້.

ໃນໄລຍະຜ່ານມາຈົນເຖິງປະຈຸບັນ ທຄຕລ ແມ່ນຍົກສູງການປະຕິບັດພັນທະ-ຫນ້າທີ່ຂອງຫົວຫນ່ວຍທີ່ມີຫນ້າທີ່ລາຍງານ, ຕັ້ງຫນ້າພັດທະນາ ແລະ ຜັນຂະຫຍາຍວຽກງານ AML/CFT ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບຕາມແນວທາງຂອງສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ແລະ ອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງເຊັ່ນ: Asia Pacific Group on Anti-Money Laundering (APG) ເປັນຕົ້ນ. ພ້ອມດຽວກັນນີ້, ທຄຕລ ຍັງໄດ້ໃຫ້ຄວາມສຳຄັນດ້ານການພັດທະນາ ແລະ ຍົກລະດັບຄວາມຮູ້-ຄວາມເຂົ້າໃຈດ້ານວຽກງານ AML/CFT ໃຫ້ແກ່ພະນັກງານ ທຄຕລ ທຸກຄົນ, ທັງນີ້ກໍ່ເພື່ອສ້າງຄວາມເຂັ້ມແຂງວຽກງານດັ່ງກ່າວພາຍໃນ ທຄຕລ ເວົ້າສະເພາະ, ເວົ້າລວມກໍ່ແມ່ນພາຍໃນຂົງເຂດການທະນາຄານຂອງ ສປປ ລາວ.





ໃນການສຳມະນາປະຈຳປີ 2023 ນີ້, ທຄຕລ ໄດ້ເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ພະນັກງານຕໍ່ກັບນະໂຍບາຍ-ແນວທາງການຈັດຕັ້ງປະຕິບັດວຽກງານ AML/CFT ຂອງອົງກອນ, ເຜີຍແຜ່ນິຕິກ□າ-ຂໍ້ມູນ ໃໝ່ໆໃຫ້ພະນັກງານຮັບຊາບ ແລະ ເຂົ້າໃຈຕໍ່ໄພຂົ່ມຂູ່, ຄວາມສ່ຽງ, ວິທີປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງທີ່ຕິດພັນກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ.

ນອກຈາກນັ້ນ, ກໍໄດ້ຍົກກໍລະນີສຶກສາເຫດການພົ້ນເດັ່ນກ່ຽວກັບອາຊະຍາກຳທາງການເງິນໃນທົ່ວໂລກ, ບັນດາພຶດຕິກຳທີ່ກ່ຽວຂ້ອງ ພ້ອມທັງມີການຖາມ-ຕອບແລກປ່ຽນບົດຮຽນທີ່ຕິດພັນການປະຕິບັດວຽກງານຕົວຈິງເພື່ອເປັນຂໍ້ມູນໃຫ້ບັນດາສາຂາເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ການສຳມະນາແມ່ນດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ ແລະ ປະສົບຜົນສຳເລັດຕາມເປົ້າໝາຍທີ່ວາງໄວ້. ຜົນສຳເລັດ ແລະບົດຮຽນທີ່ຖອດຖອນໄດ້ຈາກການຈັດສຳມະນາດັ່ງກ່າວ ຈະເປັນແນວທາງໃນການຂຶ້ນແຜນຈັດສຳມະນາໃນຄັ້ງຕໍ່ໄປໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ

ຂຽນຂ່າວ ແລະ ຖ່າຍພາບໂດຍ: ພະແນກຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ